**38. ການຊື້-ຂາຍຮຸ້ນມີການຂາດທຶນບໍ່ ຫຼື ມີແຕ່ກຳໄລ?**

ການຊື້-ຂາຍຮຸ້ນກໍ່ຄືກັບການລົງທຶນປະເພດຕ່າງໆ ຊຶ່ງສາມາດສ້າງກຳໄລ ຫຼື ມີການຂາດທຶນໄດ້, ຊຶ່ງຂຶ້ນກັບຈັງຫວະໃນການຊື້-ຂາຍຮຸ້ນ. ສຳຄັນແມ່ນຜູ້ລົງທຶນຕ້ອງໄດ້ສຶກສາຄົ້ນຄວ້າຫາຂໍ້ມູນຂອງບໍລິສັດຈົດທະບຽນ, ຕິດຕາມຜົນການນຳເນີນງານຂອງບໍລິສັດຢ່າງສະໝ່ຳສະເໝີ.

ນອກນັ້ນ, ຜູ້ລົງທຶນຕ້ອງຄຳນຶງສະເໝີວ່າ: **ທຸກການລົງທຶນມີຄວາມສ່ຽງ ຜູ້ລົງທຶນຄວນສຶກສາຂໍ້ມູນໃຫ້ຖີ່ຖ້ວນກ່ອນຕັດສິນໃຈລົງທຶນ.**